# ມິຊຊາອາທິດທີ 31 ກຳມົດທຳມະດາ ປີ B
# ວັນອາທິດທີ 04 ພະຈິກ 2018



**ພຣະວໍລະສານໂດຍນັກບຸນມາກໂກ 12, 28-34**

ໃນເວລານັ້ນ, ນັກກົດໝາຍຜູ້ໜຶ່ງເຂົ້າມາທູນຖາມພຣະເຢຊູເຈົ້າວ່າ: ພຣະບັນຍັດໃດເປັນເອກກວ່າໝູ່? ພຣະເຢຊູເຈົ້າຕອບວ່າ: ອິສຣາແອນເອີຍ ຈົ່ງຟັງເຖີດ, ພຣະບັນຍັດອັນຕົ້ນຄື: ພຣະອົງພຣະເຈົ້າຂອງເຮົາທັງຫລາຍມີແຕ່ພຣະອົງເຈົ້າດຽວ. ເຈົ້າຈົ່ງຮັກພຣະອົງພຣະເຈົ້າຂອງເຈົ້າສຸດຈິດສຸດໃຈ, ສຸດວິນຍານແລະສຸດກຳລັງຂອງເຈົ້າ. ອັນທີສອງຄື: ເຈົ້າຈົ່ງຮັກເພື່ອນມະນຸດຄືຮັກຕົວເຈົ້າເອງ. ບໍ່ມີພຣະບັນຍັດໃດໃຫຍ່ກວ່າພຣະບັນຍັດສອງປະການນີ້.

ນັກກົດໝາຍທູນຕອບວ່າ: ດີຫລາຍ, ພຣະອາຈານເອີຍ. ທ່ານວ່າພຣະເຈົ້າມີແຕ່ພຣະອົງດຽວແລະບໍ່ມີພຣະອື່ນນອກຈາກພຣະອົງນັ້ນຖືກຕ້ອງແທ້. ຮັກພຣະອົງສຸດໃຈ, ສຸດສະຕິປັນຍາ, ສຸດເຫື່ອແຮງ ແລະຮັກເພື່ອນມະນຸດຄືຮັກຕົວເອງນັ້ນປະເສີດເລີດກວ່າເຄື່ອງບູຊາແລະສິນບູຊາໃດ.

ພຣະເຢຊູເຈົ້າເຫັນວ່າເຂົາໃຫ້ຂໍ້ສັງເກດສະຫລຽວສະຫລາດດັ່ງນີ້ຈຶ່ງກ່າວວ່າ: ເຈົ້າບໍ່ຢູ່ໄກອານາຈັກຂອງພຣະເຈົ້າດອກ. ແລ້ວບໍ່ມີໃຜຖາມພຣະອົງເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 12, 28-34**

ຄຳຖາມຂອງນັກກົດໝາຍທີ່ຖາມພຣະເຢຊູເຈົ້າໃນວັນນີ້ກ່ຽວກັບບັນຍັດເອກແລະໃຫຍ່ກວ່າໝູ່ໃນບັນດາບັນຍັດຂອງໂມແຊແມ່ນບັນຍັດໃດ? ຄຳຖາມນີ້ເປັນຕາຄິດສຳລັບຜູ້ອ່ານແລະຜູ້ຟັງວາຈາຂອງພຣະເຈົ້າ. ຍ້ອນຫຍັງ? ຍ້ອນວ່າໂດຍທົ່ວໄປນັກກົດໝາຍເປັນຜູ້ທີ່ຮຽນຮູ້ພຣະທຳບັນຍັດຂອງທ່ານໂມແຊຢ່າງເລິກເຊິ່ງແລະຮູ້ຈັກຢ່າງຂຶ້ນໃຈ ແລະເຂົາກໍຮູ້ດີວ່າບັນຍັດໃດເປັນບັນຍັດເອກແລະສຳຄັນ ແຕ່ວັນນີ້ເຂົາພັດມາຖາມພຣະເຢຊູເຈົ້າກ່ຽວກັບບັນຍັດນີ້? ເບິ່ງຄືເຂົາຢາກທົດສອບຄວາມຮູ້ຂອງພຣະເຢຊູເຈົ້າກ່ຽວກັບບັນຍັດຂອງທ່ານໂມແຊ. ແລະຄຳຕອບຂອງພຣະເຢຊູເຈົ້າກໍສອດຄ່ອງແລະຖືກຕ້ອງຕາມທີ່ໄດ້ບັນທຶກໄວ້ໃນພຣະທຳຄຳພີວ່າ ບັນຍັດເອກແລະສຳຄັນທີ່ສຸດຄືບັນຍັດແຫ່ງຮັກ. ຮັກພຣະເຈົ້າແລະຮັກເພື່ອນມະນຸດ. ນັກກົດໝາຍກໍຍອມຮັບໃນຄຳຕອບຂອງພຣະເຢຊູເຈົ້າວ່າຖືກຕ້ອງ. ແລະພຣະເຢຊູເຈົ້າກໍບອກກັບເຂົາວ່າ: ເຈົ້າບໍ່ຢູ່ໄກອານາຈັກຂອງພຣະເຈົ້າ. ຍ້ອນຫຍັງ? ອາດຈະແມ່ນຍ້ອນວ່ານັກກົດໝາຍຄົນນີ້ຮູ້ຈັກບັນຍັດແຫ່ງຮັກທີ່ພຣະເຢຊູເຈົ້າກ່າວມານີ້ແຕ່ເຂົາຍັງບໍ່ໄດ້ປະຕິບັດຢ່າງແທ້ຈິງ. ອາດຈະແມ່ນນັກກົດໝາຍນີ້ມີຄວາມປາດຖະໜາຢາກຮູ້ຈັກເສັ້ນທາງທີ່ພາໄປເຖິງອານາຈັກຂອງພຣະເຈົ້າ ແຕ່ເຂົາຍັງບໍ່ພ້ອມທີ່ຈະກ້າວເດີນໄປ. ຫລືອາດຈະແມ່ນເຂົາພະຍາຍາມຢາກປະຕິບັດແຕ່ຍັງຂາດຄວາມຮັກ. ແລະຖ້າເຂົາຢາກເຂົ້າໃນອານາຈັກຂອງພຣະເຈົ້າ ກໍຕ້ອງໄດ້ຜັນປ່ຽນວິຖີຊີວິດຂອງຕົນຈາກຄວາມຮູ້ໃນທິດສະດີກ່ຽວກັບບັນຍັດເອກມາເປັນການປະຕິບັດບັນຍັດນີ້ໃນຊີວິດຂອງຕົນ.

ການປ່ຽນແປງວິຖີຊີວິດນີ້ອາດຈະບໍ່ງ່າຍສຳລັບນັກກົດໝາຍແລະອາດຈະບໍ່ງ່າຍສຳລັບພວກເຮົາເຊັ່ນດຽວກັນ. ເພາະພວກເຮົາຍັງຂາດຄວາມຮັກ. ຄວາມຮັກທີ່ມີຕໍ່ພຣະເຈົ້າ, ຄວາມຮັກທີ່ມີຕໍ່ຕົວເອງແລະຄວາມຮັກທີ່ມີຕໍ່ຄົນທີ່ບໍ່ຮັກເຮົາ. ແຕ່ວາຈາຂອງພຣະເຈົ້າໃນວັນນີ້ຢາກໃຫ້ພວກເຮົາກ້າວອີກກ້າວໜຶ່ງພ້ອມກັບພຣະອົງ ຄືການອອກຈາກຄວາມເຫັນແກ່ຕົວ, ອອກຈາກຂອບເຂດຄວາມຮັກທີ່ຕົວເອງວາງໄວ້. ເພາະຄວາມຮັກທີ່ແທ້ຈິງຄືຄວາມຮັກທີ່ບໍ່ມີເງື່ອນໄຂ. ແລະພຣະເຢຊູເຈົ້າເອງກໍສະແດງຄວາມຮັກນີ້ຕໍ່ພວກເຮົາດ້ວຍການສະຫລະຊີວິດຂອງຕົນເພື່ອພວກເຮົາຄົນບາບໃຫ້ໄດ້ຮັບຄວາມຣອດ. ເພາະພຣະອົງກ່າວວ່າ: ບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການມອບຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ.

ເມື່ອພວກເຮົາເຫັນຄວາມຮັກຂອງພຣະເຢຊູເຈົ້າມີຕໍ່ພວກເຮົາຍິ່ງໃຫຍ່ພຽງນີ້. ພວກເຮົາກໍຕ້ອງຮູ້ຈັກແບ່ງປັນຄວາມຮັກນີ້ໃຫ້ກັບຄົນອື່ນ. ແນ່ນອນມັນອາດຈະບໍ່ງ່າຍຖ້າພວກເຮົາອີງໃສ່ຄວາມສາມາດຂອງພວກເຮົາເອງ ແຕ່ຖ້າອາໄສຄວາມຮັກແລະຄວາມຊ່ວຍເຫລືອຈາກພຣະເຈົ້າແລ້ວ ທຸກສິ່ງເປັນໄປໄດ້.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນຫົນທາງນຳພວກເຮົາໄປສູ່ຄວາມຈິງແລະຊີວິດອັນແມ່ນເສັ້ນທາງແຫ່ງຄວາມຮັກ. ຮັກພຣະເຈົ້າແລະຮັກເພື່ອນມະນຸດ ເພາະພຣະເຈົ້າຂອງພວກເຮົາເປັນພຣະເຈົ້າແຫ່ງຄວາມຮັກ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ